ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 2007002/ມຫທຊ

ນະຄອນຫຼວງວຽງຈັນ, ວັນທີ: 8 ກໍລະກົດ 2020

ແຈ້ງການ

ເຖິງ: ທ່ານຜູ້ຖືຮຸ້ນ ແລະ ລູກຄ້າ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ເພີ່ມຜະລິດຕະພັນໃຫມ່ ສິນເຊື່ອລົດປ່ຽນເງິນ ສຳລັບລົດໃຫຍ່

ເນື່ອງຈາກການແຜ່ລະບາດຂອງພະຍາດ ໂຄວິດ-19 ຕັ້ງແຕ່ຕົ້ນປີທີ່ຜ່ານມາ ເຊິ່ງມີຜົນກະທົບຕໍ່ກັບການດຳລົງຊີວິດຂອງປະຊາຊົນ ກໍຄືການຂາດລາຍໄດ້, ຂາດທຶນໝຸນວຽນໃນການປະກອບທຸລະກິດ. ສະນັ້ນ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຈຶ່ງໄດ້ມີນະໂຍບາຍໃຫ້ຄວາມຊ່ວຍເຫຼືອແກ່ລູກຄ້າໃຫ້ມີຄວາມຄ່ອງໂຕທາງດ້ານການເງິນເພື່ອຮັບມືກັບພະຍາດ ໂຄວິດ-19 ກັບໂຄງການພິເສດ “ສິນເຊື່ອລົດປ່ຽນເງິນ ສູ້ໂຄວິດ” ພຽງແຕ່ນຳທະບຽນລົດໃຫຍ່ ແລະ ລົດຈັກມາຈຳນຳບໍລິສັດເຮົາໂດຍບໍ່ຕ້ອງໂອນທະບຽນ ອະນຸມັດໄວພາຍໃນ 1 ມື້ ແລະ ພ້ອມຮັບເງິນທັນທີ.

ເຊິ່ງໂຄງການ “ສິນເຊື່ອລົດປ່ຽນເງິນ ສູ້ໂຄວິດ” ນີ້ ບໍລິສັດ ໄດ້ໃຫ້ເຊົ່າສິນເຊື່ອຄືນໃຫມ່ ສຳລັບລົດໃຫຍ່ເປັນຄັ້ງທຳອິດ ແລະ ຖືເປັນຜະລິດຕະພັນໃຫມ່ປະຈຳປີ 2020 ຂອງບໍລິສັດ

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານເພື່ອຮັບຊາບດ້ວຍ.

ຜູ້ອຳນວຍການໃຫ່ຍ

(ທ່ານ ມານີ ຕຣີລິດວິໄລ)